RI24BBA_______

# ກະຊວງສຶກສາທິການ ແລະ ກິລາ

## ສະຖາບັນ ຣັຕນະ ບໍລິຫານທຸລະກິດ

More Than Education

Knowledge Integrity Innovation Society

**ເອກະສານປະກອບຄັດຕິດ:**

- ໃບຢັ້ງຢືນທີ່ຢູ່ ແລະ ກ໋ອບປີ້ ບັດປະຈຳຕົວ ຫລື ສຳມະໂນຄົວ : 1 ສະບັບ
- ໃບປະກາດສະນີຍະບັດ ຈົບມ.ປາຍ (ກ໋ອບປີ້ສີ color copy) : 1 ສະບັບ

(ສຳຫຼັບນັກສຶກສາຈົບ ມໍ ປາຍ ໃນສົກສຶກສາ 2023-24: ໃບຄະແນນ ຫຼື ໃບເຂົ້າຫ້ອງເສັງ ກໍ່ໃຊ້ໄດ້)

- ຮູບຖ່າຍຂະໜາດ 3 x 4 ແລະ ຕິດໃສ່ແບບຟອມມາພ້ອມ : 2 ໃບ

**ກໍລະນີໄດ້ຮຽນຈົບວິຊາສະເພາະໃດໜຶ່ງ (ຕໍ່ເນື່ອງ)**

- ໃບປະກາສະນີຍະບັດຈົບວິຊາສະເພາະ / ຊັ້ນສູງ (ກ໋ອບປີ້ສີ) : 1 ສະບັບ

## ຄ່າລົງທະບຽນສອບເສັງ 40.000 ກີບ

| ແຜນການຮັບນັກສຶກສາປະຈຳສົກສຶກສາ 2024-2025 | | | |
|---|---|---|---|
| ຊຸດທີ 1 | | ຊຸດທີ 2 | |
| ເລີ່ມຂາຍຄຳຮ້ອງ | ວັນທີ : 23 / 05 / 2024 | ເລີ່ມຂາຍຄຳຮ້ອງ | ແຈ້ງຕາມຫລັງ |
| ປິດຮັບຄຳຮ້ອງ | ວັນທີ : 29 / 08 / 2024 | ປິດຮັບຄຳຮ້ອງ | ແຈ້ງຕາມຫລັງ |
| ສອບເສັງເຂົ້າ | ວັນທີ : 30 / 08 / 2024 | ສອບເສັງເຂົ້າ | ແຈ້ງຕາມຫລັງ |
| ປະກາດຜົນສອບເສັງ | ແຈ້ງຕາມຫລັງ | ປະກາດຜົນສອບເສັງ | ແຈ້ງຕາມຫລັງ |
| ລົງທະບຽນເຂົ້າຮຽນ | ແຈ້ງຕາມຫລັງ | ລົງທະບຽນເຂົ້າຮຽນ | ແຈ້ງຕາມຫລັງ |

**ໝາຍເຫດ**: ເວລາມາສອບເສັງໃຫ້ແຕ່ງກາຍສຸພາບໃສ່ເສື້ອຂາວ, ໂສ້ງ ຫລື ສິ້ນ ສີດຳ ຫລື ສີຟ້າແກ່.

ແບບຟອມ ອອນລາຍ Online Application (2024-25)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**************************

Knowledge Integrity Innovation Society

More Than Education

ກະຊວງສຶກສາທິການ ແລະ ກິລາ

ສະຖາບັນ ຣັຕນະ ບໍລິຫານທຸລະກິດ

ເລກທີ່ ..........RI24BBA_________.

## ບັດອະນຸຍາດເຂົ້າສອບເສັງ

ຕິດຮູບ 3 x 4

ຄະນະຮັບຜິດຊອບການສອບເສັງຄັດເລືອກເອົານັກສຶກສາເຂົ້າຮຽນຊຸດໃໝ່ ປະຈຳສົກສຶກສາ 2024-2025

ອະນຸຍາດໃຫ້ ທ້າວ,ນາງ...........................................................................ເກີດເມື່ອວັນທີ............

ປັດຈຸບັນຢູ່ບ້ານ ..................................ເມືອງ....................................ແຂວງ..................

ເຂົ້າສອບເສັງທີ່ສູນສອບເສັງ ສະຖາບັນ ຣັຕນະ ບໍລິຫານທຸລະກິດ. ຄະນະກຳມະການສອບເສັງໄດ້ກວດກາບັດສອບເສັງນີ້ເຫັນວ່າຖືກຕ້ອງຕາມລະບຽບເປັນທີ່ຮຽບຮ້ອຍແລ້ວ ຈຶ່ງໄດ້ຮັບເອົາຜູ້ກ່ຽວເຂົ້າສອບເສັງ.

ວັນທີ ສອບເສັງ: 30/08/2024

ເວລາ ສອບເສັງ: 8:00 ໂມງ ເຊົ້າ

ວັນທີ ....................................

**ຫົວໜ້າສະຖາບັນ**

ສະຖາບັນ ຣັຕນະ ບໍລິຫານທຸລະກິດ RATTANA INSTITUTE of BUSINESS ADMINISTRATION
ຖະໜົນ ດົງປ່າຍນາ, ບ້ານ ສະພານທອງ, ເມືອງ ສີສັດຕະນາກ, ນະຄອນຫລວງ ວຽງຈັນ, ສ ປ ປ ລາວ, ຕູ້ ປ ນ 977
Donpaina Road, Saphanthong Village, Sisattanak District, Vientiane Capital, Lao PDR; Tel: +856 21 413871
P.O. Box 977 E-mail: contact@rbac.edu.la www.rbac.edu.la www.rbac.info facebook.com/rbacedu

rbac.edu.la

RI24BBA______

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************
Knowledge Integrity Innovation Society

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນ ຣັຕນະ ບໍລິຫານທຸລະກິດ

More Than Education

ຕິດຮູບ
3 x 4

# ໃບສະເໜີເຂົ້າຮຽນ

(ສົກສຶກສາ 2024-2025)

**I. ຂໍ້ມູນນັກສຶກສາ:**

ຊື່ ແລະ ນາມສະກຸນ (ພາສາລາວ):........................................................................ ເພດ: ☐ ຍິງ ☐ ຊາຍ

ຊື່ ແລະ ນາມສະກຸນ (ເປັນພາສາອັງກິດ):…………………………………………………………… ກຣຸບເລືອດ:…….

ວັນເດືອນປີເກີດ:…..…/…..…/……….ບ້ານເກີດ:…………………………..ເມືອງ:……………………………. ແຂວງ:……………

ປັດຈຸບັນຢູ່ບ້ານ:………………………….ເມືອງ:....................................ແຂວງ:……………………..ເບີມືຖື:…………..

ເບີວອສ໌ແອັບ:................e-mail:…………………………………………….ສັນຊາດ:……….ສາດສະໜາ:....... ຊົນເຜົ່າ:.......

ອາຊີບປະຈຸບັນ:..........................ບ່ອນເຮັດວຽກ:..............................................ໜ້າທີ່:.................. ຕຳແໜ່ງ:................

**ສະຖານະ:** ☐ ໂສດ ☐ ແຕ່ງງານ ຖ້າແຕ່ງ ຊື່-ນາມສະກຸນ (ຜົວ/ເມຍ): …………………………………………………………

ອາຊີບ:……………………………..ບ່ອນເຮັດວຽກ:………………………………………………. ເບີໂທ:..............................

**II. ຂໍ້ມູນຜູ້ປົກຄອງນັກສຶກສາ:** ຊື່-ນາມສະກຸນ (ພໍ່):…………………………………………………. ເບີໂທ:..............................

ຊື່-ນາມສະກຸນ (ແມ່):………………………………………………………………………………….. ເບີໂທ:..............................

**III. ຂໍ້ມູນຕິດຕໍ່ພົວພັນໃນກໍລະນີສຸກເສີນ ຫຼື ຜູ້ໃຫ້ທຶນການສຶກສາ:**

ຊື່-ນາມສະກຸນ:…………………………………………………………….ສາຍພົວພັນ:…………… ເບີໂທ:…………………

**IV. ຂໍ້ມູນຫລັກສູດ / ພາກ ສາຂາ-ວິຊາ ທີ່ຈະເຂົ້າຮຽນ:** ຫລັກສູດ: ☐ ປະລິນຍາຕີ

ສາຍຮຽນ: ☐ ພາສາອັງກິດ-ທຸລະກິດ(BE) ☐ ພາສາອັງກິດ-ທົ່ວໄປ(GE) ☐ ການບໍລິຫານ(GM)
☐ ການເງິນ-ການທະນາຄານ(FB) ☐ ການຕະຫຼາດ(MK) ☐ ການທ່ອງທ່ຽວ(TR)

ຮຽນພາກ: ☐ ເຊົ້າ ☐ ບ່າຍ ☐ ຄ່ຳ ຮຽນລະບົບ: ☐ ປົກະຕິ (4 ປີ) ☐ ຕໍ່ເນື່ອງ (2 ປີ)

**V. ຂໍ້ມູນສະຖານການສຶກສາທີ່ຮຽນຈົບມາ:** ຊື່ຂອງສະຖານການສຶກສາ ທີ່ຮຽນຈົບມາ: ..........................................................

ຊື່ຂອງສູນສອບເສັງ ມໍ ປາຍ ທີ່ເສັງຜ່ານມາ: ..........................................................

**VI. ຮູ້ຈັກ ສະຖາບັນ ຣັຕນະ ມາຈາກ:**

☐ ລາຍການໂທລະພາບຣັຕນະ ☐ ແວັບໄຊສະຖາບັນ ☐ ເຟສ໌ບຸກ ☐ ຕິກຕ໋ອກ ☐ ຢູທູບ ☐ໂຊໂຊມີເດຍ ອື່ນໆ
☐ ໃບປິວ-ແຜ່ນພັບ ☐ ໜັງສືພິມ-ວາລະສານ ☐ ໝູ່ເພື່ອນ-ພີ່ນ້ອງ-ຄົນຮູ້ຈັກ

**VII. ເຫດຜົນທີ່ເຂົ້າຮຽນຢູ່ທີ່ ສະຖາບັນ ຣັຕນະ:**

☐ ຕາມຈຸດປະສົງຂອງຕົນເອງ ☐ ພໍ່ແມ່ເຄີຍຮຽນມາ ☐ ໝູ່/ພີ່ນ້ອງເຄີຍຮຽນມາ ☐ ຊື່ສຽງຂອງສະຖາບັນ ☐ ຫລັກສູດການຮຽນ
☐ ສະດວກຢູ່ໃກ້ບ້ານ ☐ ສະຖານທີ່-ສິ່ງແວດລ້ອມ ☐ ຄ່າຮຽນທີ່ເໝາະສົມ

ຂ້າພະເຈົ້າ ຂໍຮັບປະກັນວ່າ ເນື້ອໃນທັງຫມົດທີ່ໄດ້ຂຽນລົງໃນໃບສະຫມັກເຂົ້າຮຽນນີ້ ແມ່ນຖືກຕ້ອງຕາມຄວາມເປັນຈິງ, ຖ້າຫາກໄດ້ເຂົ້າຮຽນ ຂ້າພະເຈົ້າຈະນັບຖືການຈັດຕັ້ງ, ປະຕິບັດຕາມລະບຽບຫລັກການຂອງທາງສະຖາບັນຢ່າງເຄັ່ງຄັດ ແລະ **ຄ່າຮຽນຄ່າທຳນຽມຕ່າງໆ ພ້ອມດ້ວຍເອກະສານທຸກຢ່າງທີ່ປະກອບມາຍື່ນເຂົ້າຮຽນນັ້ນແມ່ນຈະບໍ່ມີສິດຖອນຄືນ ຫລື ໂອນໃຫ້ບຸກຄົນອື່ນມາຮຽນແທນບໍ່ວ່າໃນກໍລະນີໃດກໍ່ຕາມ.**

ນະຄອນຫຼວງວຽງຈັນ, ວັນທີ……………………..……….

**ເຊັນຜູ້ຮັບເອກະສານ** **ເຊັນຜູ້ປົກຄອງ (ຜູ້ຮັບປະກັນ-ຜູ້ອຸປະຖຳ)** **ເຊັນຜູ້ກ່ຽວ**

ຊື່ເຕັມ:…………… ຊື່ເຕັມ:………………………….. ຊື່ເຕັມ:……………….....

(ແບບຟອມ ລົງທະບຽນ Online Application (2024-25)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**********************

Knowledge Integrity Innovation Society

ກະຊວງສຶກສາທິການ ແລະ ກິລາ

ສະຖາບັນ ຣັດຕະນະ ບໍລິການທຸລະກິດ

More Than Education

# ໃບຮັບຮູ້ ແລະ ປະຕິຍານຕົນກ່ອນເຂົ້າຮຽນ

(ສົກສຶກສາ 2024-2025)

ຂ້າພະເຈົ້າຊື່ ແລະ ນາມສະກຸນ ……………..................................................……..........ອາຍຸ........ປີ ໄດ້ຕົກລົງເປັນເອກະພາບລວມກັນກັບຜູ້ອຸປະຖຳໃນດ້ານທຶນສຶກສາ ຈຶ່ງໄດ້ຕົກລົງເຫັນດີສະໝັກເຂົ້າຮຽນໃນພາກວິຊາ ແລະ ສາຂາ ຕາມຫລັກສູດທີ່ວາງອອກ ຖ້າຕົນເອງໄດ້ເຂົ້າຮຽນຢູ່ໃນສະຖາບັນແຫ່ງນີ້, ຂ້າພະເຈົ້າຂໍປະຕິຍານຕົນເອງຕໍ່ທາງສະຖາບັນຕາມລາຍລະອຽດດັ່ງນີ້:

- ຈະເຄົາລົບນັບຖືການຈັດຕັ້ງ ແລະ ປະຕິບັດຕາມກົດລະບຽບທີ່ສະຖາບັນວາງອອກທຸກປະການ;
- ຈະປະຕິບັດຕົນໃຫ້ຖືກຕ້ອງຕາມກົດໝາຍບ້ານເມືອງຮີດຄອງປະເພນີ ແລະ ວັດທະນະທຳຂອງລາວ ຈະບໍ່ສ້າງບັນຫາຊຶ່ງຈະເປັນຜົນກະທົບຕໍ່ທາງສະຖາບັນ ແລະ ການສຶກສາຂອງຕົນເອງເດັດຂາດ;
- ຈະນຸ່ງຖືຢູ່ໃນຄວາມເປັນລະບຽບໃຫ້ຖືກຕ້ອງຕາມເຄື່ອງແບບທີ່ທາງສະຖາບັນວາງອອກຄື: ນັກສຶກສາຍິງ: ນຸ່ງເສື້ອຂາວແຂນສັ້ນ ຫລື ແຂນຍາວ, ສິ້ນສີຟ້າເຂັ້ມ ຫລື ດຳ, ຜູກກາລະວັດຕິດກາເຄື່ອງໝາຍ ຂອງສະຖາບັນ. ເອົາເສື້ອເຂົ້າໃນ ຫ້າມຍ້ອມຜົມເປັນສີຕ່າງໆ ຊຶ່ງບໍ່ແມ່ນສີດຳທຳມະຊາດ (ບໍ່ວ່ານັກສຶກສາຮຽນພາກເຊົ້າ, ພາກບ່າຍ ຫລື ພາກຄ່ຳ ໃຫ້ປະຕິບັດຄືກັນ);
- ນັກສຶກສາຊາຍ: ນຸ່ງເສື້ອຂາວແຂນສັ້ນ ຫລື ແຂນຍາວ ສົ້ງສີຟ້າເຂັ້ມ ຫລື ດຳ, ຜູກກາລະວັດ ຕິດກາເຄື່ອງໝາຍຂອງສະຖາບັນ. ເອົາເສື້ອເຂົ້າໃນ ຫ້າມໃສ່ຕຸ້ມຫູ ແລະ ຫ້າມຈີ່ງຜົມຍາວຕັ້ງບ່າ ຫລື ຍ້ອມຜົມເປັນສີຕ່າງໆ ຊຶ່ງບໍ່ແມ່ນສີດຳທຳມະຊາດ (ບໍ່ວ່ານັກສຶກສາຮຽນພາກເຊົ້າ, ພາກບ່າຍ ຫລື ພາກຄ່ຳ ໃຫ້ປະຕິບັດຄືກັນ);
- ຈະບໍ່ວິ້ນແຊວຢູ່ໃນຫ້ອງ ຈະບໍ່ຂີດຂຽນໃສ່ໂຕະ, ຕັ່ງ, ຝາ ຈະບໍ່ສູບຢາ ຫລື ກິນອາຫານ ແລະ ເຄື່ອງດື່ມທຸກຢ່າງ (ຍົກເວັ້ນນ້ຳດື່ມບໍລິສຸດທີ່ເປັນຂວດ) ຢູ່ໃນຫ້ອງຮຽນ ແລະ ຈະບໍ່ເຮັດເປື້ອນໃນຫ້ອງຮຽນ ແລະ ບໍລິເວນຂອງໂຮງຮຽນ ໂດຍເດັດຂາດ;
- ຖ້ານັກສຶກສາມາຮຽນຊ້າເກີນ 15 ນາທີຈະຕ້ອງໄປຂໍໃບອະນຸຍາດເຂົ້າຫ້ອງຮຽນ ຈາກຫ້ອງການຈັດຕັ້ງ ເພື່ອໄປສະເໜີຕົວເຂົ້າຫ້ອງນຳອາຈານປະຈຳວິຊາສອນ;
- ໃນກໍລະນີທີ່ຈຳເປັນບໍ່ມີເງື່ອນໄຂມາຮຽນໄດ້ ເຊັ່ນ: ເຈັບໄຂ້, ເກີດອຸປະຕິເຫດ, ມີວຽກຈຳເປັນທາງການ ຫລື ມີຂໍ້ຫຍຸ້ງຍາກອື່ນໆ ໃນຄອບຄົວ ຕ້ອງຂຽນໃບຄຳຮ້ອງຂໍລາພັກຄັດຕິດເອກະສານຫລັກຖານໃນການຂາດ ມາສະເໜີແກ່ທາງສະຖາບັນ;
- ນັກສຶກສາທຸກຄົນຈະຕ້ອງໄດ້ຈ່າຍຄ່າໜ່ວຍກິດເພີ່ມ ໃນກໍລະນີເວລາມີການຮຽນເພີ່ມວັນເສົາ ຫລື ຍາມພັກແລ້ງຕາມຈຳນວນວິຊາ ແລະ ໜ່ວຍກິດທີ່ທາງສະຖາບັນວາງອອກ ຫລື ວິຊາຕ່າງໆທີ່ເສັງຕົກ;
- **<u>ຄ່າຮຽນ ແລະ ຄ່າທຳນຽມທຸກຢ່າງ ທີ່ນັກສຶກສາໄດ້ຈ່າຍລ່ວງໜ້າໄປແລ້ວນັ້ນ ບໍ່ມີສິດຖອນຄືນ ຫລື ໂອນໃຫ້ຄົນໜຶ່ງຄົນໃດມາຮຽນແທນຢ່າງເດັດຂາດບໍ່ວ່າຈະເປັນກໍລະນີໃດກໍ່ຕາມ (ຖືວ່າສະຫຼະສິດໄປເລີຍ)</u>**;
- ນັກສຶກສາທຸກຄົນຈະຕ້ອງມີສ່ວນຮ່ວມໃນກິດຈະກຳຕ່າງໆທີ່ມີສ່ວນພົວພັນກັບນັກສຶກສາ ຫລື ຂອງສະຖາບັນໄດ້ຈັດຂຶ້ນ;

Online Application (2024-25)

- ນັກສຶກສາມີຈຸດປະສົງຢາກສ້າງຄອບຄົວ (ແຕ່ງງານ) ທາງສະຖາບັນຈະບໍ່ຈຳກັດ ແຕ່ບໍ່ໃຫ້ແຕະຕ້ອງເຖິງການຮຽນ, ຖ້ານັກສຶກສາຍິງຄົນໃດຫາກມີລູກຖືພາມານແລ້ວທາງສະຖາບັນຈະໃຫ້ໂຈະການຮຽນໄວ້ 1 ປີ, ຫລັງຈາກເກີດລູກ ມີຄວາມສະດວກໃນການຮຽນແລ້ວກໍ່ກັບຄືນມາຮຽນໄດ້ປົກກະຕິ, ແຕ່ນັກສຶກສາ ຈະຕ້ອງໄດ້ຂຽນໃບຄຳຮ້ອງ ຂໍອະນຸຍາດຈາກຫ້ອງການຄຸ້ມຄອງນັກສຶກສາເສຍກ່ອນ, ຖ້ານັກສຶກສາຜູ້ໃດບໍ່ມາແຈ້ງ ຫລື ບໍ່ມາສະເຫນີຈະຖືວ່ານັກສຶກສາຜູ້ນັ້ນປະລະການຮຽນ ແລະ ຈະບໍ່ມີສິດເຂົ້າຮຽນຕໍ່ໂດຍເດັດຂາດ;
- ນັກສຶກສາທີ່ຈັດໃຫ້ຄ້າງຊັ້ນຮຽນປີເກົ່າ (ບໍ່ໃຫ້ຂຶ້ນຫ້ອງ) ຫລື ໃຫ້ຮຽນຄືນໃຫມ່ ແລະ ສອບເສັງໃຫມ່ໃນກໍລະນີດັ່ງນີ້:

  ກ. ຂາດຮຽນໂດຍບໍ່ມີຄຳຮ້ອງຂໍລາພັກ ຫລື ຂາດຮຽນບໍ່ມີເຫດຜົນເກີນ 30 ຊົ່ວໂມງ ຕໍ່ພາກຮຽນຫນຶ່ງ ຫລື ຂາດໂຮງຮຽນເກີນ 60 ຊົ່ວໂມງຕໍ່ປີ;

  ຂ. ຄະແນນວິຊາພາກບັງຄັບຕ່ຳກວ່າ 60% ລົງມາ;

  ຄ. ຄະແນນຜົນລົບຈາກຄຸນສົມບັດ;

  ງ. ຖ້າຫາກນັກສຶກສາຄົນໃດຄົນຫນຶ່ງ ທຸຈະລິດການສອບເສັງ (ກ່າຍເອງ ຫລື ໃຫ້ຄົນອື່ນກ່າຍ);

  ຈ. ການລະເມີດຕໍ່ລະບຽບວິໄນຂອງທາງສະຖາບັນແບບຈົງໃຈ ປະຕິບັດເກີນສອງຄັ້ງຂຶ້ນໄປ ອີງຕາມການ ບັນທຶກການຕັກເຕືອນ.
- ອີງຕາມລະບຽບການສຶກສາຂອງສະຖາບັນ ສຳລັບນັກສຶກສາສອບເສັງທຽບເຂົ້າຮຽນແມ່ນຈະໄດ້ລົງທະບຽນຮຽນຄືນຫມວດວິຊາບັງຄັບຂອງສະຖາບັນຄືນໃຫມ່ ຕາມລະບຽບໂຄງສ້າງຂອງຫລັກສູດ ຈົນຄົບຖ້ວນຕາມວິຊາທີ່ໄດ້ກຳນົດໄວ້ ຈຶ່ງຈະມີສິດສອບເສັງປ້ອງກັນເອົາໃບປະກາສະນິຍະບັດໄດ້;
- ນັກສຶກສາທີ່ຈົບຊັ້ນສູງ ຫຼື ປະລິນຍາຕີ ຈາກສະຖາບັນຈະຕ້ອງມີຄະແນນສະສົມສະເລ່ຍບໍ່ຕ່ຳກວ່າ GPA: 2.00 ຂຶ້ນໄປ ຈຶ່ງຈະມີສິດໄດ້ຮັບໃບປະກາສະນິຍະບັດຈາກສະຖາບັນໄດ້;
- ຖ້າເຮັດຜິດຕໍ່ກົດລະບຽບວິໄນຂອງທາງສະຖາບັນກໍ່ຄືການປະພຶດຕົນບໍ່ດີຕໍ່ສັງຄົມ, ຕໍ່ລະບຽບກົດໝາຍບ້ານເມືອງແບບຮ້າຍແຮງທາງສະຖາບັນຈະໄດ້ຕັດສິດການເປັນນັກສຶກສາຢູ່ໃນສະຖາບັນແຫ່ງນີ້.

ຂ້າພະເຈົ້າ ທ້າວ / ນາງ.......................................................................................ໄດ້ອ່ານ ແລະ ເຂົ້າໃຈໃນກົດລະບຽບທຸກໆຂໍ້ທີ່ໄດ້ກ່າວມາແລ້ວນີ້ຢ່າງຈະແຈ້ງ. ສະນັ້ນ, ຈຶ່ງໄດ້ລົງນາມລາຍເຊັນຂ້າງລຸ່ມນີ້ໄວ້ເພື່ອເປັນຫຼັກຖານອ້າງອີງ.

ນະຄອນຫຼວງວຽງຈັນ,ວັນທີ.....................................

**ເຊັນຮັບຮູ້ຈາກຜູ້ປົກຄອງ ຫລື ຜູ້ໃຫ້ທຶນການສຶກສາ** | **ລາຍເຊັນຂອງຜູ້ກ່ຽວ**

ຂຽນຊື່ເຕັມ:................................................. | ຂຽນຊື່ເຕັມ:..............................

ແບບຟອມອອນລາຍ Online Application (2024-25)